ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງບໍລິຄຳໄຊ

ພະແນກໂຍທາທິການ ແລະ ຂົນສົ່ງ

ເລກທີ..1885..../ຍທຂ

ບໍລິຄຳໄຊ, ວັນທີ..3...ພຶດສະພາ 2026

**ຊື່ໂຄງການ: ກໍ່ສ້າງທາງປູຢາງ 2 ຊັ້ນ ເທດສະບານເມືອງປາກຊັນ I ທາງຊອຍບ້ານສີວິໄລ, ທາງນ້ຳເບີ 6, ນ້ຳເບີ 7, ເບີ 8, ນ້ຳເບີ 10,ເບີ 11 ແລະ ເບີ 12 ລວງຍາວທັງໝົດ 2,470.19 ແມັດ ເມືອງປາກຊັນ ແຂວງ ບໍລິຄຳໄຊ.**

# ຫນັງສືເຊີນເຂົ້າຮ່ວມແຂ່ງຂັນປະມູນ

**ພະແນກໂຍທາທິການ ແລະ ຂົນສົ່ງແຂວງບໍລິຄຳໄຊ** ໄດ້ຮັບການຊີ້ນຳຈາກຂັ້ນເທິງໃນການຈັດຕັ້ງປະຕິບັດການປະມູນຈັດຊື້-ຈັດຈ້າງ ໂຄງການກໍ່ສ້າງທາງປູຢາງ 2 ຊັ້ນ ເທດສະບານເມືອງປາກຊັນ I ທາງຊອຍບ້ານສີວິໄລ, ທາງນ້ຳເບີ 6, ນ້ຳເບີ 7,ເບີ 8, ນ້ຳເບີ 10,ເບີ 11 ແລະ ເບີ12, ລວງຍາວທັງໝົດ 2,470.19 ແມັດ ເມືອງປາກຊັນ ແຂວງບໍລິຄຳໄຊ;

1. ດ້ວຍການດຳເນີນການປະມູນເປີດກວ້າງພາຍໃນ, ສຳລັບບ້ວງເງິນທີ່ຈະຊຳລະສະສາງ ແມ່ນຈະໄດ້ສະເໜີເອົາເຂົ້າແຜນສາລະບານງົບປະມານແຫ່ງລັດໃນແຕ່ລະສົກປີ 2026;
2. ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງບໍລິຄຳໄຊ ຂໍເຊີນບັນດາບໍລິສັດ ທີ່ມີໃບອານຸຍາດດຳເນີນທຸລະກິດດ້ານການກໍ່ສ້າງຂົວ-ທາງ ທີ່ມີຄວາມສົນໃຈ, ເຂົ້າຮ່ວມປະມູນໂຄງການດັ່ງກ່າວນີ້,ໄລຍະການກໍ່ສ້າງແມ່ນ 12 ເດືອນ;
3. ການປະມູນ ຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງ ທີ່ໄດ້ກຳນົດໄວ້ ຢູ່ໃນກົດໝາຍວ່າດ້ວຍການປະມູນຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການປະມູນຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ ລົງວັນທີ 13 ກຸມພາ 2019;
4. ການປະມູນນີ້ ແມ່ນອະນຸຍາດໃຫ້ທຸກໆບໍລິສັດທີ່ມີຄວາມເຫມາະສົມ, ມີໃບອະນຸຍາດດຳເນີນທຸລະກິດຖືກຕ້ອງຕາມກົດ ໝາຍ ທີ່ກ່ຽວພັນກັບວຽກທີ່ຈະດຳເນີນການກໍ່ສ້າງ ຢູ່ໃນຂອບເຂດ ແຂວງບໍລິຄຳໄຊ ຫຼື ທົ່ວປະເທດ;
5. ບໍລິສັດທີ່ມີຄວາມເຫມາະສົມສົນໃຈ ສາມາດຕິດຕໍ່ພົວພັນ ແລະ ຊື້ເອກະສານປະມູນໄດ້ທີ່ ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງບໍລິຄຳໄຊ, ຂະແໜງຂົວທາງ, ຢູ່ບ້ານທົ່ງໄຊ, ເມືອງປາກຊັນ, ແຂວງບໍລິຄຳໄຊ, ໂທລະສັບ/ແຟັກ: 054-212091 ແລະ ຂະແໜງຈັດຊື້-ຈັດຈ້າງ ພະແນກການເງິນແຂວງ. ໃນວັນ ແລະ ເວລາລັດຖະການ: ວັນຈັນ - ວັນສຸກ, ເວລາ 8:00-12:00 ແລະ 13:00-16:00; ໂດຍໃຫ້ຍື່ນໜັງສືສະເໜີຫາ ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງບໍລິຄຳໄຊ, ເລີ່ມແຕ່ວັນທີ 5 ພຶດສະພາ 2026 ເປັນຕົ້ນໄປ, ໃນລາຄາ 1,000,000 ກີບຈຳນວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ, ວິທີການຊຳລະຕ້ອງຈ່າຍເປັນເງິນສົດ;
6. ຊອງປະມູນຕ້ອງສົ່ງ ໃນເວລາ ຫລື ກ່ອນເວລາ 9:00 ໂມງເຊົ້າ, ຂອງວັນທີ 11 ມິຖຸນາ 2026; ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ;
7. ກອງປະຊຸມ ກ່ອນການຍື່ນຊອງປະມູນ ແລະ ເຂົ້າຢ້ຽມຢາມພາກສະໜາມ (site visit) ຈະໄດ້ຈັດຂຶ້ນໃນວັນທີ 8 ມິຖຸນາ 2026, ເວລາ 8:30 ໂມງເຊົ້າ.



SCAN AnyScanner

8. ການເປີດຊອງປະມູນ ຈະໄດ້ຈັດຂຶ້ນທີ່ ຫ້ອງປະຊຸມ ຂະແໜງຂົວທາງ, ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງບໍລິຄຳໄຊ ທາງ 21 ບ້ານທົ່ງໄຊ ເມືອງປາກຊັນ ແຂວງບໍລິຄຳໄຊ, ເວລາ 9:00 ໂມງເຊົ້າ ຂອງວັນທີ 11 ມິຖຸນາ 2026; ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ເຂົ້າແຂ່ງຂັນປະມູນທີ່ສົນໃຈເຂົ້າຮ່ວມນຳ.
9. ເອກະສານປະມູນ ຕ້ອງໄດ້ປະກອບຫນັງສືຄ້ຳປະກັນການປະມູນມາພ້ອມໃນມູນຄ່າບໍ່ຫຼຸດ 2% ຂອງມູນຄ່າປະມູນ ໂດຍຫນັງສືຄ້ຳປະກັນການປະມູນ ຕ້ອງແມ່ນຫນັງສືຄ້ຳປະກັນຂອງທະນາຄານທີ່ຖືກຕ້ອງກັບແບບຟອມທີ່ໄດ້ກຳນົດໄວ້ຢູ່ໃນເອກະສານປະມູນ ຫຼື ໜັງສືຄ້ຳປະມູນໂຄງການ ດ້ວຍອາຈາ ຕິດຄັດພ້ອມ.

ເຊັນແທນຫົວໜ້າພະແນກ
ຮອງຫົວໜ້າພະແນກ

ຕິດຕໍ່:
1. ທ່ານ ກ້ອນນອນດຳ ຈັນທະມີນາວົງ 020 2211 7888
2. ທ່ານ ຄຳປະເສີດ ພັນທະວົງ ຂະແໜງຈັດຊື້-ຈັດຈ້າງ ພະແນກການເງິນແຂວງ 020 2887 0055

ພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງບໍລິຄຳໄຊ

ໂກສາຈານ ແສນທະວີໄຊ